ທະນາຄານຮ່ວມພັດທະນາ

| Position ID: | EXC_CMS/CARD |
|---|---|

# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂການສະໝັກ

**ຊື່ຕຳແໜ່ງ:** ພະນັກງານ ຄຸ້ມຄອງລະບົບບັດ

**Position Name:** ***Card Management System Officer***

❖ ໜ້າທີ່ຮັບຜິດຊອບຫຼັກ (ToR):

- ຮັບຜິດຊອບລວມວຽກງານຂອງ UPI Issuer ແລະ UPI Acquirer;
- ທົດສອບ ແລະ ຄຸ້ມຄອງ Interface ລະຫວ່າງ Cardworks ແລະ Flexcube;
- Import ຂໍ້ມູນເລກບັດເຂົ້າໃນລະບົບ Flexcube;
- ສະໜອງຂໍ້ມູນລາຍງານການນຳໃຊ້ບັດຈາກຖານຂໍ້ມູນ Cardworks ແລະ Flexcube ເພື່ອສົ່ງໃຫ້ພະແນກທີ່ກ່ຽວຂ້ອງ;
- ຕິດຕາມ ແລະ ແກ້ໄຂບັນຫາການສົ່ງຂໍ້ມູນ (File Processing) ລະຫວ່າງ Cardworks ແລະ Flexcube;
- ສ້າງ User ID Cardworks ຕາມໃບສະເໜີ;
- ຮັກສາລະບົບຖານຂໍ້ມູນ ທີ່ກ່ຽວຂ້ອງກັບ ລະບົບ ATM Switching, Cardworks;
- ຮັບຜິດຊອບຜະລິດຕະພັນ Alipay/WeChat Pay/UPI QRC;
- ສະໜອງຂໍ້ມູນການນຳໃຊ້ບັດ ເພື່ອອອກລາຍງານ Acquirer ແລະ Issuer Quarterly Report ໃຫ້ສູນ Visa/MasterCard/UPI/JCB;
- ສະໜອງ ຂໍ້ມູນການນຳໃຊ້ບັດເພື່ອອອກລາຍງານ LAPS Acquirer Monthly Report;
- ສ້າງຄູ່ມື ກ່ຽວກັບວຽກງານທີ່ຕົນເອງໄດ້ຮັບຜິດຊອບ;
- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສາຍງານ.

❖ ວຸດທິການສຶກສາ (Academic Background):

- ຜູ້ທີ່ສະໝັກໃນຕຳແໜ່ງນີ້ຈະຕ້ອງຮຽນຈົບລະດັບ ປະລິນຍາຕີ ຂຶ້ນໄປໃນສາຂາວິຊາ:
  - ວິສະວະກຳໄອທີ, ວິສະວະກຳຄອມພິວເຕີ ຫຼື ວິທະຍາສາດຄອມພິວເຕີ;
  - ການເງິນ-ການທະນາຄານ ທີ່ມີພື້ນຖານດ້ານເຕັກເນີກໄອທີ ຫຼື ສາຂາອື່ນທີ່ກ່ຽວຂ້ອງ.

❖ ກ່ຽວກັບຜູ້ສະໝັກ (About Applicant):

- ຜູ້ສະໝັກທີ່ຮຽນຈົບໃໝ່ ຫຼື ມີປະສົບການເຮັດວຽກມາກ່ອນ ຍິ່ງເປັນການດີ;
- ຜູ້ສະໝັກຈະຕ້ອງມີຄວາມຮູ້ຄວາມສາມາດໃນການສື່ສານເປັນທັງພາສາລາວ ແລະ ອັງກິດໃນລະດັບດີຫຼາຍ, ຖ້າຮູ້ພາສາຕ່າງປະເທດໃດໜຶ່ງເພີ່ມຍິ່ງເປັນການດີ;
- ເປັນຄົນທີ່ມີມະນຸດສຳພັນດີ, ສາມາດຕິດຕໍ່ປະສານງານກັບລູກຄ້າ ແລະ ຄູ່ຮ່ວມທຸລະກິດໄດ້ທຸກລະດັບ;
- ມີຄວາມສາມາດໃນການຂຽນ Angular, Node js, Flutter, Vue.js , Java, C#, PHP ຢ່າງໃດຢ່າງໜຶ່ງ;
- ມີຄວາມຮູ້ລະບົບຖານຂໍ້ມູນ (SQL Server, Oracle, My SQL, MangoDB, MariaDB);
- ເປັນຄົນທີ່ບໍ່ເຄີຍກໍ່ຄະດີອາຍາ ແລະ ບໍ່ເຄີຍຖືກຕັດອິດສະພາບມາກ່ອນ;
- ເປັນຄົນທີ່ສາມາດເຮັດວຽກກັບເພື່ອນຮ່ວມງານຫຼາຍຄົນໄດ້, ມີຄວາມອົດທົນສູງ, ມີຄວາມລະອຽດໃນໜ້າວຽກທີ່ໄດ້ຮັບມອບໝາຍ, ມີຄວາມຊື່ສັດ, ແລະ ຍຶດໝັ້ນໃນໜ້າທີ່.